

1-877-328-9677

ใຊ້ບັດ EBT ຂອງທ່ານຊື້ອາຫານໄດ້ຢ່າງໃດ?

ກ່ອນທີ່ທ່ານຈະຊື້ຂອງ, ກວດເບິ່ງເງິນສ່ວນເຫລືອຂອງທ່ານເສັຍກ່ອນດ້ວຍການເບິ່ງຍ່ໃນໃບຮັບໃບສຸດທ້າຍ ຫລື ໂທຣະສັບ ຫາຜແນກບໍຣິການລູກຄ້າໂດຍບໍ່ເສັຍຄ່າທີ່ 1-877-328-9677. ເງິນສ່ວນເຫລືອນີ້ຈະເປັນຈຳນວນເງິນສ່ວນຫລາຍທີ່ທ່ານສາມາດຈ່າຍດ້ວຍບັດຂອງທ່ານ.

ຂັ້ນ 1 ເອົາຂອງທີ່ທ່ານຊື້ໄປຫາບ່ອນກວດຂອງອອກ. ທ່ານອາດຈະຕ້ອງໄດ້ແຍກອາຫານທີ່ທ່ານມີສິດແລະບໍ່ມີສິດ ຊື້ອອກຈາກກັນ, ນີ້ກໍ່ຂຶ້ນກັບບາງຫ້າງ.

ຂັ້ນ 2 ຮດບັດຂອງທ່ານຜ່ານເຄື່ອງຮັບບັດຂອງລາຍການຂາຍ (POS) ຫລື ຍື່ນບັດ EBT ຂອງທ່ານໃຫ້ພນັກງານຂາຍຂອງ.

ຂັ້ນ 3 ຕີເລກສ່ວນຕົວ (PIN) ສີ່ໂຕຂອງທ່ານເຂົ້າໄປ. ເຄື່ອງຮັບບັດຈະສະແດງ **** ໃຫ້ເຫັນແທນທີ່ຈະເປັນໂຕເລກທີ່ທ່ານຕີເຂົ້າໄປ.

ຂັ້ນ 4 ກົດເຄື່ອງຫມາຍ Enter.

ຂັ້ນ 5 ພນັກງານຂາຍຂອງຕີຈຳນວນທີ່ທ່ານຊື້ເຂົ້າໄປ. ຖ້າຈຳນວນນັ້ນຖືກ, ທ່ານກໍ່ກົດ ເຄື່ອງຫມາຍ "OK" ຫລື "YES".

ຂັ້ນ 6 ທ່ານຈະໄດ້ຮັບສຳເນົາໃບຮັບຊຶ່ງຈະບົ່ງບອກ:

- ຊື່ ແລະ ທີ່ຢ່ຂອງຫ້າງ
- ຈຳນວນເງິນທີ່ທ່ານຊື້
- ສ່ວນເຫລືອຂອງເງິນຟູດສແຕັມຂອງທ່ານ

ຂັ້ນ 7 ເກັບມ້ຽນໃບຮັບຂອງທ່ານເພື່ອທ່ານຈະຮູ້ສ່ວນເງິນເຫລືອອັນໃຫມ່ຂອງທ່ານ ເມື່ອທ່ານໄປຊື້ຂອງເທື່ອຫນ້າ.

ທ່ານຈະບໍ່ຖືກໃຫ້ຈ່ຍຄ່າທັມນຽມທີ່ທ່ານໃຊ້ເງິນຊ່ວຍເຫລືອແບບຟູດສແຕັມຂອງທ່ານ.

ຈະກວດເບິ່ງເງິນສ່ວນເຫລືອໃນບັດ EBT ຂອງທ່ານໄດ້ຢ່າງໃດ?

ເງິນສ່ວນເຫລືອອັນໃຫມ່ຂອງທ່ານຈະຖືກພິມໄວ້ຢູ່ເທິງໃບຮັບໃບສຸດທ້າຍຂອງທ່ານ. **ຈົງເກັບມຽນໃບຮັບຂອງທ່ານສເມີ.** ຖ້າຫາກທ່ານເຮັດໃບຮັບໃບສຸດທ້າຍເສັຍ, ທ່ານສາມາດໂທຣະສັບຫາຜແນກບໍຣິການລູກຄ້າ ຫລື ຖາມຫ້າງຄ້າເບິ່ງວ່າທ່ານ ສາມາດກວດເບິ່ງເງິນສ່ວນເຫລືອຂອງທ່ານຢູ່ບ່ອນລາຍການຂາຍ (POS) ໄດ້ຫລືບໍ່.

ຖ້າຫາກບັດຂອງທ່ານເສັຍ ຫລື ຖືກລັກ, ຈົງໂທຣະສັບຫາຜແນກບໍຣິການລູກຄ້າ ໃນທັນທີຕາມໂທຣະສັບທີ່ບໍ່ຕ້ອງເສັຍຄ່າ ທີ່ 1-877-328-9677. ພວກເຂົາຈະບອກທ່ານວ່າຈະຂໍເອົາບັດໃຫມ່ໄດ້ຢ່າງໃດ. ຖ້າຫາກທ່ານບໍ່ໄດ້ແຈ້ງ ວ່າບັດຂອງທ່ານເສັຍ ຫລື ຖືກລັກ, ຄົນອື່ນສາມາດໃຊ້ບັດຂອງທ່ານຈ່າຍເງິນ ຊ່ວຍເຫລືອຂອງທ່ານຫມົດ ແລະ ເງິນນີ້ຈະບໍ່ຖືກໃຊ້ຄືນ.

ໂທຣະສັບຫາຜແນກບໍຣິການລູກຄ້າໄດ້ໂດຍບໍ່ເສັຍຄ່າ ຖ້າຫາກວ່າ:

- ບັດຂອງທ່ານເສັຍ ຫລື ຖືກລັກ.
- ບັດຂອງທ່ານໃຊ້ບໍ່ໄດ້.
- ທ່ານຢາກປ່ຽນເລກສ່ວນຕົວ (PIN) ຂອງທ່ານຍ້ອນວ່າທ່ານລືມ ຫລື ຖ້າຫາກວ່າຄົນອື່ນຮູ້ ເລກສ່ວນຕົວ (PIN) ຂອງທ່ານ. ຫ້ອງການຊ່ວຍເຫລືອຊຸມ ຊົນອາດຈະສາມາດຊ່ວຍທ່ານປ່ຽນເລກພິນຂອງທ່ານໄດ້.
- ທ່ານຢາກຮູ້ວ່າທ່ານຍັງມີເງິນເຫລືອເທົ່າໃດຢູ່ໃນແອັກຄ້າວຂອງທ່ານ.
- ທ່ານໄດ້ຈ່າຍຄ່າຊື້ຂອງ ແຕ່ ບໍ່ໄດ້ຮັບຂອງນັ້ນ ຫລື ຖ້າທ່ານໄດ້ຈ່າຍຫລາຍເກີນ ກວ່າທີ່ທ່ານຊື້.
- ທ່ານມີຄຳຖາມ ຫລື ບັນຫາອື່ນໆ.

24 ຊົ່ວໂມງຕໍ່ມື້ / 7 ມື້ຕໍ່ອາທິດ

1-877-328-9677

TTY: 1-800-735-2929

ເບິ່ງຕາມແຜນຢູ່ໃນປື້ມຝຶກຫັດ EBT ຂອງທ່ານ ແລະ ຕີວັນທີ່ເງິນຊ່ວຍເຫລືອ ຂອງທ່ານຈະເຂົ້າແອັກຄ້າວຂອງທ່ານເຂົ້າໄປ:

OSP 03 75071

(ຈາກວັນທີ 1 ຫາວັນທີ 10 ຂອງເດືອນ)

State of California
Arnold Schwarzenegger, Governor
Health and Human Services Agency
S. Kimberly Belshé, Secretary
Department of Social Services

Flex your POWER

© 2001 State of California

USDA is an equal opportunity provider and employer.

PUB 390 (Lao)